ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສາທາລະນສຸກ

ກົມອາຫານ ແລະ ຢາ

ໂທ : 021 243657

ເລກທີ 2660/16. ກອຢ

ນະຄອນຫລວງ, ວັນທີ 16 JUN 2016

# ແຈ້ງການ

ຮຽນ : ທ່ານ ຫົວໜ້າ ອຳນວຍການ ໂຮງງານຜະລິດຢາ ແລະ ບໍລິສັດ ຂາອອກ-ຂາເຂົ້າ ດ້ານຢາ ແລະ ຜະລິດຕະພັນການແພດ ໃນທົ່ວປະເທດ.

ເລື່ອງ : ການປະກອບເອກະສານຂໍອະນຸມັດນຳ ເຂົ້າວັດຖຸດິບ, ອຸປະກອນບັນຈຸ, ຢາປົວພະຍາດ ແລະ ອຸປະກອນການແພດ ມາຮັບໃຊ້ການຜະລິດ ແລະ ເພື່ອຈຳໜ່າຍ.

- ອີງຕາມ ນະໂຍບາຍແຫ່ງຊາດດ້ານຢາ ເພື່ອຮັບປະກັນຄຸນະພາບຂອງຜະລິດຕະພັນຢາໃຫ້ບັນລຸມາດຕະຖານສາກົນ.
- ອີງຕາມ ກົດໝາຍວ່າດ້ວຍຢາແລະຜະລິດຕະພັນການແພດ (ສະບັບປັບປຸງ) ເລກທີ07/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ຂໍ້ກຳນົດ ກົດລະບຽບ ຫຼື ບັນດານິຕິກຳຢູ່ລຸ່ມກົດໝາຍ ທີ່ກ່ຽວຂ້ອງກັບຢາ ແລະ ຜະລິດຕະພັນການແພດ.

ເພື່ອຮັບປະກັນໃຫ້ຢາ ແລະ ຜະລິດຕະພັນການແພດ ທີ່ຜະລິດ ແລະ ຈຳໜ່າຍ ໃນ ສປປ ລາວ ມີ ຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ແລະ ລາຄາສົມເຫດສົມຜົນ ນຳໃຊ້ເຂົ້າໃນວຽກງານການກັນພະຍາດ ແລະ ປິ່ນປົວສຸຂະພາບຂອງຄົນເຈັບຢ່າງມີປະສິດທິຜົນ.

ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ, ຂໍແຈ້ງມາຍັງບັນດາໂຮງງານຜະລິດຢາ ແລະ ບໍລິສັດ ຂາອອກ-ຂາເຂົ້າ ດ້ານຢາ ແລະ ຜະລິດຕະພັນການແພດ ທົ່ວປະເທດ ກ່ຽວກັບການປະກອບເອກະສານເພື່ອຂໍອະນຸຍາດນຳເຂົ້າວັດຖຸດິບ, ອຸປະກອນບັນຈຸ, ຢາປົວພະຍາດ ແລະ ອຸປະກອນການແພດ ມາຮັບໃຊ້ການຜະລິດ ແລະ ເພື່ອຈຳໜ່າຍ ຕ້ອງປະຕິບັດດັ່ງນີ້:

I. **ເອກະສານສະເໜີນຳເຂົ້າປະກອບ:**

1. ໃບສະເໜີຂໍອະນຸຍາດນຳເຂົ້າວັດຖຸດິບຕາມການກຳນົດ ຂອງກົມອາຫານ ແລະ ຢາ, ເຊັນຮັບຮູ້ຈາກວິຊາການ ແລະ ຜູ້ອຳນວຍ ການໂຮງງານ/ບໍລິສັດ.
2. ໃບສັ່ງຊື້ຂອງໂຮງງານ ຫຼື ບໍລິສັດ (Purchase order). (ຈຳນວນ 3 ຊຸດ)
3. ໃບນຳສົ່ງສິນຄ້າ (Invoice) ຕ້ອງລະບຸເລກຊຸດຜະລິດ, ວັນເດືອນປີຜະລິດ ແລະ ວັນເດືອນປີໝົດອາຍຸ (ຊື່ຜະລິດຕະພັນໃຫ້ຂຽນລະອຽດຈະແຈ້ງ ຕາມຊື່ທີ່ໄດ້ຂຶ້ນທະບຽນ, ບໍ່ໃຫ້ຂຽນຫຍໍ້ ຫຼື ໃສ່ພຽງແຕ່ລະຫັດຂອງສິນຄ້າ) (ຈຳນວນ 3 ຊຸດ)
4. ໃບມັດຫໍ່ສິນຄ້າ (Packing list) (ຈຳນວນ 3 ຊຸດ)

II. **ເອກະສານການຢັ້ງຢືນທີ່ຕ້ອງຄັດຕິດເພີ້ມເຕີມ:**

ນອກຈາກບັນດາເອກະສານເຊິ່ງໄດ້ລະບຸໃນຂໍ້ I (1, 2, 3 ແລະ 4) ທີ່ຕ້ອງຍື່ນສະເໜີຂໍອະນຸຍາດນຳເຂົ້າ, ຍັງມີເອກະສານທາງວິຊາການຈຳນວນໜຶ່ງ ຕ້ອງຄັດຕິດມາ ເພື່ອຮັບປະກັນດ້ານຄຸນນະພາບໃນຂອດການຈໍລະຈອນຈຳໜ່າຍ ດັ່ງລາຍລະອຽດຄື:

- **ສຳລັບການນຳເຂົ້າວັດຖຸດິບ**:
  - ໃບຢັ້ງຢືນການຜະລິດທີ່ດີ ຂອງໂຮງງານຜູ້ຜະລິດ ເຊິ່ງອອກໃຫ້ໂດຍອົງການຄຸ້ມຄອງຂອງປະເທດຜູ້ຜະລິດວັດຖຸດິບ ຫຼື ໃບຢັ້ງຢືນຈາກ ອົງການອະນາໄມໂລກ (WHO Prequalification)
  - ໃບຢັ້ງຢືນການວິໄຈຄຸນນະພາບຂອງຊຸດຜະລິດທີ່ຂໍນຳເຂົ້າ ( Certificate of Analysis)
- **ສຳລັບອຸປະກອນບັນຈຸ**:

- ອຸປະກອນບັນຈຸທີ່ສະເໜີນຳເຂົ້າ ຕ້ອງແມ່ນລາຍການທີ່ຈະນຳມາບັນຈຸຜະລິດຕະພັນທີ່ໄດ້ຂຶ້ນທະບຽນແລ້ວ, ຖ້າແມ່ນລາຍການທີ່ບໍ່ທັນຂຶ້ນທະບຽນ ຕ້ອງແມ່ນລາຍການທີ່ໄດ້ຜ່ານການອະນຸຍາດຜະລິດຢາຕົວຢ່າງແລ້ວ.

- **<u>ສຳລັບ Vaccin:</u>**

- Certificate of lot released ຂອງຊຸດຜະລິດຕະພັນທີ່ນຳເຂົ້າ ເຊິ່ງອອກໃຫ້ໂດຍອົງການຄຸ້ມຄອງດ້ານຢາຂອງປະເທດຜູ້ຜະລິດ.
- ໃບຢັ້ງຢືນການຜະລິດທີ່ດີ (GMP Certificate) ຈາກປະເທດຜູ້ຜະລິດ ແລະ/ຫຼື WHO Prequalification Certificate.

- **<u>ສຳລັບອຸປະກອນການແພດ:</u>**

- ໃບຢັ້ງຢືນ ISO 13485 ຢັ້ງຢືນຈາກອົງການຄຸ້ມຄອງຂອງປະເທດຜູ້ຜະລິດ ຫຼື ສະຖາບັນທີ່ໄດ້ຮັບຮອງຈາກພາກລັດ
- ໃບຢັ້ງຢືນການວິໄຈຄຸນນະພາບ (ສຳລັບອຸປະກອນທີ່ນຳໃຊ້ຊິ້ນເປືອງ Consumable Devices) ຕາມມາດຕະຖານການກວດກາວິໄຈຂອງອົງການອະນາໄມໂລກ.
- ສຳລັບອຸປະກອນການແພດທີ່ເປັນເຄື່ອງມືສອງ (ເຄື່ອງທີ່ໃຊ້ແລ້ວ) ແມ່ນບໍ່ພິຈາລະນາໃຫ້ນຳເຂົ້າ.

ການດຳເນີນທຸລະກິດຂອງໂຮງງານຜະລິດຢາ, ບໍລິສັດ ຂາອອກ-ຂາເຂົ້າ ດ້ານຢາ ແລະ ຜະລິດຕະພັນການແພດ ແລະ ບໍລິສັດຂາຍຍົກພາຍໃນ ໂດຍສະເພາະການສະໜອງວັດຖຸດິບ ແລະ ຜະລິດຕະພັນສຳເລັດຮູບ ຕ້ອງມີການສັນຍາກັບແຫຼ່ງສະໜອງ ບົນພື້ນຖານຄວາມຮັບຜິດຊອບດ້ານຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພ ຕໍ່ຜູ້ນຳໃຊ້. ສຳລັບເອກະສານຢັ້ງຢືນທີ່ປະກອບ, ຖ້າຫາກວ່າບໍ່ແມ່ນສະບັບຕົ້ນ ໃຫ້ຈ້ຳກາຢັ້ງຢືນຈາກບໍລິສັດກ່ຽວຂ້ອງ.

ແຈ້ງການສະບັບນີ້ມີຜົນສັກສິດໃນການຈັດຕັ້ງປະຕິບັດພາຍຫຼັງ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືໃນການປະຕິບັດຕາມແຈ້ງການນີ້ດ້ວຍ.

ຫົວໜ້າ ກົມອາຫານ ແລະ ຢາ

ດຣ.ສົມທະວີ ຈາງວີສົມມິດ

สาทาละนะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ບໍລິສັດ: ………………..                                                                 ເລກທີ :

ໂທ: ( ເບີຂອງບ/ສ ແລະ ເບີ ຜູ້ຮັບຜິດຊອບ Invoice)

## <u>ໃບສະເໜີ</u>

ຮຽນ : ທ່ານ ຫົວໜ້າກົມ ອາຫານ ແລະ ຢາ,  ກະຊວງສາທາລະນະສຸກ

ເລື່ອງ : ຂໍອະນຸຍາດນໍາເຂົ້າ

ຂ້າພະເຈົ້າ ບໍລິສັດ ……………………………………………, ສໍານັກງານຕັ້ງຢູ່ ຖະໜົນ ………… ບ້ານ:…………………, ເມືອງ …………………………… ແຂວງ ………………………………….. ຖືທະບຽນວິສາຫະກິດເລກທີ:……………………………. ລົງວັນທີ : …………………

ຈຸດປະສົງຂໍອະນຸຍາດນໍາເຂົ້າສິນຄ້າປະເພດ :  ……………………… ມາຈາກປະເທດ : ……………

ຕາມໃບແຈ້ງລາຄາສິນຄ້າ (invoice) ເລກທີ …………………  ລົງວັນທີ: ……………………….

ໂດຍຜ່ານດ່ານພາສີ : …………………………..

ສິນຄ້າທີ່ຂໍອະນຸຍາດນໍາເຂົ້າລວມມີ:

- ຈໍານວນ ……… ລາຍການ
- ນໍ້າໜັກຈິງ: ……… ກິໂລ (Kg) ; ນໍ້າໜັກລວມ: ………..ກິໂລ (Kg)
- ມູນຄ່າ: …………………

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອພິຈາລະນາ ແລະ ອະນຸມັດຕາມທາງຄວນດ້ວຍ

ທີ່………, ວັນທີ …………………..

<u>ວິຊາການບໍລິສັດ</u>                                                        <u>ຜູ້ອໍານວຍການບໍລິສັດ</u>